ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງ

ເລກທີ 920/ພຕສ

ອຸດົມໄຊ, ວັນທີ 26 ກັນຍາ 2024

# ແຈ້ງການ

**ເຖິງ:** ບັນດາທ່ານຜູ້ປະກອບການຮ້ານຈຳໜ່າຍ, ຕິດຕັ້ງ, ສ້ອມແປງອຸປະກອນໄອຊີທີ, ບັນດາບໍລິສັດທີ່ໃຫ້ບໍລິການຂົນສົ່ງໄປສະນີ ແລະ ບໍລິສັດໂທລະຄົມມະນາຄົມ ແລະ ອິນເຕີເນັດພາຍໃນແຂວງ ທີ່ນັບຖື.

**ເລື່ອງ:** ຮັກສາຄວາມເປັນລະບຽບຮຽບຮ້ອຍ ຢູ່ພາຍໃນເທດສະບານເມືອງໄຊ.

- ອີງຕາມ ຂໍ້ຕົກລົງ ຂອງທ່ານເຈົ້າແຂວງ, ສະບັບເລກທີ 776/ອຊ, ລົງວັນທີ 15 ສິງຫາ 2022 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ພະແນກ ຕສ ແຂວງອຸດົມໄຊ;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄຸ້ມຄອງຄວາມເປັນລະບຽບໃນ 22 ບ້ານໃນຕົວເມືອງໄຊ ສະບັບເລກທີ 1014/ອຊ, ລົງວັນທີ 02 ກໍລະກົດ 2024;
- ອີງຕາມ ທິດຊີ້ນຳຂອງຫົວໜ້າຄະນະຊີ້ນຳການແກ້ໄຂຄວາມເປັນລະບຽບໃນຕົວເມືອງໄຊ.

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ ຂໍຖືເປັນກຽດແຈ້ງການມາຍັງບັນດາທ່ານ ຜູ້ປະກອບການຮ້ານຈຳໜ່າຍ, ຕິດຕັ້ງ, ສ້ອມແປງອຸປະກອນໄອຊີທີ, ບັນດາບໍລິສັດຂົນສົ່ງໄປສະນີ ແລະ ບໍລິສັດໂທລະຄົມມະນາຄົມ ແລະ ອິນເຕີເນັດ ຮັບຊາບ ເພື່ອເປັນການສ້າງຂະບວນການຄຳນັບຮັບຕ້ອນວັນສຳຄັນທາງປະຫວັດສາດຂອງພັກ, ຂອງຊາດ ແລະ ການກະກຽມດຳເນີນກອງປະຊຸມ 3 ຂັ້ນຂອງພັກ ຈຶ່ງແຈ້ງການມາຍັງບັນດາທ່ານ ກ່ຽວກັບການຮັກສາຄວາມເປັນລະບຽບຮຽບຮ້ອຍ ຢູ່ພາຍໃນເທດສະບານເມືອງໄຊ ແມ່ນໃຫ້ປະຕິບັດດັ່ງນີ້:

1 ຮ້ານຈຳໜ່າຍ, ຕິດຕັ້ງ, ສ້ອມແປງອຸປະກອນໄອຊີທີ, ບັນດາປ່ອງບໍລິການບໍລິສັດຂົນສົ່ງໄປສະນີ ຫ້າມບໍ່ໃຫ້ນຳໃຊ້ສະຖານທີ່ສາທາລະນະເປັນບ່ອນດຳເນີນກິດຈະການເປັນຕົ້ນແມ່ນການຕໍ່ເຕີມຮ້ານ, ການວາງສິ່ງຂອງ ແລະ ຕັ້ງປ້າຍໂຄສະນາທຸກປະເພດຢູ່ເທິງທາງຄົນຍ່າງ ເດັດຂາດ;

2 ບັນດາບໍລິສັດໃຫ້ບໍລິການໂທລະຄົມມະນາຄົມ ແລະ ອິນເຕີເນັດ ຫ້າມຕິດຕັ້ງປ້າຍໂຄສະນາຢູ່ຕາມທາງຄົນຍ່າງ, ໃຫ້ເກັບມ້ຽນ, ຮື້ຖອນສາຍໂທລະສັບ ແລະ ອິນເຕີເນັດທີ່ບໍ່ໄດ້ນຳໃຊ້ອອກ ແລະ ມ້ຽນມັດສາຍທີ່ຍັງນຳໃຊ້ປົກກະຕິໃຫ້ມີຄວາມເປັນລະບຽບຈົບງາມ ໂດຍສົມທົບກັບບໍລິສັດໄຟຟ້າລາວ ໃນການຈັດຕັ້ງປະຕິບັດຕົວຈິງ;

3 ການຈັດຕັ້ງປະຕິບັດແມ່ນເລີ່ມແຕ່ມື້ອອກແຈ້ງການສະບັບນີ້ເປັນຕົ້ນໄປ ຖ້າຫາກພາກສ່ວນໃດບໍ່ປະຕິບັດຕາມແຈ້ງການສະບັບນີ້ທາງຄະນະຮັບຜິດຊອບກວດກາພົບເຫັນແມ່ນຈະຖືກກ່າວເຕືອນ ແລະປະຕິບັດມາດຕະການຕາມລະບຽບກົດໝາຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າພະແນກ

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ແຂວງອຸດົມໄຊ

ສົມບຸນ ມະນີ

ສແກນດ້ວຍ CamScanner